ດຳລັດ ....................................................................................................4
ກົດຫມາຍ ວ່າດ້ວຍມູນມໍຣະດົກ ແລະ ພື້ນຖານ ຂອງການສືບທອດມູນມໍຣະດົກ....................................5
ພາກທີ I ວ່າດ້ວຍບົດບັນຍັດທົ່ວໄປ....................................................................................5
ຫມວດທີ 1 ມູນມໍຣະດົກ ແລະ ພື້ນຖານຂອງການສືບທອດມູນມໍຣະດົກ ...........................................5
ມາດຕາ 1. ມູນມໍຣະດົກ ...............................................................................................5
ມາດຕາ 2. ການສືບທອດມູນມໍຣະດົກ ...............................................................................5
ມາດຕາ 3. ມູນມໍຣະດົກຂອງຜູ້ຖືກສານຕັດສິນເປັນຜູ້ທີ່ເສັງຊີວິດ ..............................................5
ມາດຕາ 4. ວັນເວລາເປີດການສືບທອດມູນມໍຣະດົກ. ..............................................................6
ມາດຕາ 5. ບ່ອນເປີດການສືບທອດມູນມໍຣະດົກ ....................................................................6
ຫມວດທີ 2 ຜູ້ສືບທອດມູນມໍຣະດົກ .....................................................................................6
ມາດຕາ 6. ຜູ້ສືບທອດມູນມໍຣະດົກ ...................................................................................6
ຫມວດທີ 3 ການເສັງສິດສືບທອດມູນມໍຣະດົກ.........................................................................6
ມາດຕາ 7. ການສໍ້ໂກງມູນມໍຣະດົກ ...................................................................................6
ມາດຕາ 8. ການເສັງສິດໃນການຮັບມູນມໍຣະດົກ ....................................................................7
ມາດຕາ 9. ຜູ້ເສັງສິດສືບທອດມູນມໍຣະດົກ ............................................................................7
ຫມວດທີ 4 ການຮັບ ແລະ ການສະລະມູນມໍຣະດົກ......................................................................7
ມາດຕາ 10. ການຮັບມູນມໍຣະດົກ.........................................................................................7
ມາດຕາ 11. ມູນມໍຣະດົກທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາ .....................................................8
ມາດຕາ 12. ຂອບເຂດສິດໃນການຊື້ຂາດມູນມໍຣະດົກ ................................................................8
ມາດຕາ 13. ການສະລະມູນມໍຣະດົກ .....................................................................................8
ມາດຕາ 14. ການສະລະມູນມໍຣະດົກຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ແລະ
ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ...................................................................................9
ພາກທີ II ວ່າດ້ວຍສິດສືບທອດມູນມໍຣະດົກຕາມກົດຫມາຍ ...........................................................9
ຫມວດທີ 1 ການແບ່ງປັນມູນມໍຣະດົກລະຫວ່າງບັນດາຜູ້ສືບທອດຕາມກົດຫມາຍ ...................................9
ມາດຕາ 15. ກໍລະນີທີ່ພາໃຫ້ມີການສືບທອດມູນມໍຣະດົກຕາມກົດຫມາຍ ..........................................9
ມາດຕາ 16. ການແບ່ງປັນມູນມໍຣະດົກລະຫວ່າງ ຜົວ ຫລື ເມັຽທີ່ຍັງມີຊີວິດຢູ່ ແລະ ລູກ.........................9
ມາດຕາ 17. ການແບ່ງປັນມູນມໍຣະດົກລະຫວ່າງ ຜົວ ຫລື ເມັຽທີ່ຍັງມີຊີວິດຢູ່ ແລະ ຍາດສາຍຕັ້ງ .....9
ມາດຕາ 18. ການແບ່ງປັນມູນມໍຣະດົກລະຫວ່າງຍາດພີ່ນ້ອງສາຍຂວາງ.........................................10
ມາດຕາ 19. ການແບ່ງປັນມູນມໍຣະດົກລະຫວ່າງພວກລູກຂອງຜູ້ທີ່ເສັງຊີວິດ.....................................10
ມາດຕາ 20. ສິດໃນການຮັບມູນມໍຣະດົກ ຊຶ່ງເປັນຂອງລູກທີ່ຍັງຢູ່ໃນທ້ອງຂອງຜູ້ເປັນແມ່ .............10
ມາດຕາ 21. ການສືບທອດມູນມໍຣະດົກ ລະຫວ່າງ ຫົວຫນ້າຄອບຄົວ ແລະ ຜູ້ຮັບໃຊ້ ...................10
ມາດຕາ 22. ມູນມໍຣະດົກທີ່ບໍ່ມີຜູ້ສືບທອດ ............................................................................11
ມາດຕາ 23. ມູນມໍຣະດົກຂອງພິກຂຸ, ສາມະເນນ ......................................................................11
ມາດຕາ 24. ສິດສືບທອດມູນມໍຣະດົກຂອງ ຜົວ ເມັຽທີ່ແຍກກັນຢູ່ ..............................................11

ໝວດທີ 2 ການສືບທອດມູນມໍລະດົກແທນທີ່ກັນ ........ 11
ມາດຕາ 25. ຜູ້ສືບທອດມູນມໍລະດົກແທນທີ່ກັນ ........ 11
ມາດຕາ 26. ເງື່ອນໄຂຂອງການສືບທອດມູນມໍລະດົກແທນທີ່ກັນ ........ 11
ມາດຕາ 27. ສິດຂອງຜູ້ສະລະມູນມໍລະດົກ ........ 12
ໝວດທີ 3 ການຮ້ອງຂໍແບ່ງປັນມູນມໍລະດົກ ........ 12
ມາດຕາ 28. ການສະເໜີແບ່ງປັນມູນມໍລະດົກ ........ 12
ມາດຕາ 29. ການເຮັດບັນຊີມູນມໍລະດົກ ........ 12
ມາດຕາ 30. ອາຍຸຄວາມໃນການຮ້ອງຟ້ອງເອົາມູນມໍລະດົກ ........ 12
ມາດຕາ 31. ການແບ່ງປັນມູນມໍລະດົກທີ່ຢູ່ໃນການຄອບຄອງຂອງຜູ້ສືບທອດຜູ້ໃດຜູ້ໜຶ່ງ ........ 12
ພາກທີ III ວ່າດ້ວຍສິດສືບທອດມູນມໍລະດົກຕາມພິໄນກຳ ........ 13
ໝວດທີ 1ການເຮັດພິໄນກຳ ........ 13
ມາດຕາ 32. ສິດໃນການມອບ ຫລື ເຮັດພິໄນກຳ ........ 13
ມາດຕາ 33. ຂອບເຂດສິດໃນການມອບ ຫລື ຍົກຊັບ ຫລື ເຮັດພິໄນກຳ ........ 13
ມາດຕາ 34. ພິໄນກຳເປັນລາຍລັກອັກສອນ ........ 13
ມາດຕາ 35. ພິໄນກຳທາງປາກເປົ່າ ........ 14
ມາດຕາ 36. ຜູ້ສືບທອດສຳຮອງ ........ 14
ມາດຕາ 37. ສິດຂອງຜູ້ສືບທອດມູນມໍລະດົກຕາມພິໄນກຳ ........ 14
ມາດຕາ 38. ຜູ້ບໍ່ມີສິດຮັບຊັບຕາມພິໄນກຳເປັນລາຍລັກອັກສອນ ........ 14
ມາດຕາ 39. ການແຕ່ງຕັ້ງຜູ້ປົກຄອງຊັບ ........ 14
ໝວດທີ 2 ການລົບລ້າງພິໄນກຳ ........ 15
ມາດຕາ 40. ການປ່ຽນແປງ ຫລື ລົບລ້າງພິໄນກຳ ........ 15
ມາດຕາ 41. ສາເຫດທີ່ພາໃຫ້ພິໄນກຳຕົກໄປ ........ 15
ມາດຕາ 42. ພິໄນກຳເປັນໂມຄະ ........ 15
ໝວດທີ 3 ການປະຕິບັດພິໄນກຳ ........ 15
ມາດຕາ 43. ການແຕ່ງຕັ້ງຜູ້ປະຕິບັດພິໄນກຳ ........ 15
ມາດຕາ 44. ສິດ ແລະ ພັນທະຂອງຜູ້ປະຕິບັດພິໄນກຳ ........ 16
ພາກທີ IV ວ່າດ້ວຍການປົກປັກຮັກສາມູນມໍລະດົກ ແລະ ຄວາມຮັບຜິດຊອບຂອງຜູ້ສືບທອດ ........ 16
ໝວດທີ 1 ການປົກປັກຮັກສາມູນມໍລະດົກ ........ 16
ມາດຕາ 45. ມາດຕະການປົກປັກຮັກສາມູນມໍລະດົກ ........ 16
ມາດຕາ 46. ບຸກຄົນທີ່ບໍ່ສາມາດເປັນຜູ້ຄຸ້ມຄອງມູນມໍລະດົກ ........ 16
ມາດຕາ 47. ສິດ ແລະ ໜ້າທີ່ຂອງຜູ້ຄຸ້ມຄອງມູນມໍລະດົກ ........ 16
ມາດຕາ 48. ການລົບລ້າງແຕ່ງຕັ້ງຜູ້ຄຸ້ມຄອງມູນມໍລະດົກ ........ 17
ໝວດທີ 2 ຄວາມຮັບຜິດຊອບຂອງຜູ້ສືບທອດມູນມໍລະດົກ ........ 17
ມາດຕາ 49. ການຊຳລະໜີ້ສິນ ........ 17

ມາດຕາ 50. ການທີ່ບໍ່ທັນໄດ້ຊໍາລະໜີ້ສິນຂອງຜູ້ສືບທອດມູນມໍຣະດົກ....................................17
ມາດຕາ  51. ກໍານົດເວລາໃນການທວງໜີ້ສິນ..................................................................18
ມາດຕາ 52. ການແບ່ງປັນມູນມໍຣະດົກທີ່ບໍ່ສາມາດຕົກລົງກັນໄດ້...........................................18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

ເລກທີ 37ປທປທ
ລົງວັນທີ 27/7/90

# ດຳລັດ

**ຂອງປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ

- ອີງຕາມມະຕິຂອງກອງປະຊຸມ ຜູ້ແທນປະຊາຊົນທົ່ວປະເທດ ຄັ້ງວັນທີ 2 ທັນວາ 1975 ວ່າດ້ວຍການແຕ່ງຕັ້ງປະທານປະເທດ.
- ອີງຕາມມະຕິຕົກລົງຂອງກອງປະຊຸມ ຄັ້ງທີ 4 ສະໄໝນວິສາມັນ ຂອງສະພາປະຊາຊົນສູງສຸດ ຊຸດທີ II ກ່ຽວກັບການຮັບຮອງເອົາກົດໜາຍ ວ່າດ້ວຍ ການສືບທອດມູນມໍຣະດົກ ສະບັບເລກທີ 03/90/ສປສ ລົງວັນທີ 10 ກໍລະກົດ 1990.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກດຳລັດ:**

ມາດຕາ 1: ປະກາດໃຊ້ກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ.
ມາດຕາ 2: ດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 27 ກໍລະກົດ 1990
ຜູ້ວ່າການແທນປະທານປະເທດ
ພູມີ ວົງວິຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

ສະພາປະຊາຊົນສູງສຸດ ເລກທີ 03/90/ສປສ

# ກົດໝາຍ ວ່າດ້ວຍມູນມໍຣະດົກ ແລະ ພື້ນຖານ ຂອງການສືບທອດມູນມໍຣະດົກ.

ພາກທີ I ວ່າດ້ວຍບົດບັນຍັດທົ່ວໄປ

## ໝວດທີ 1 ມູນມໍຣະດົກ ແລະ ພື້ນຖານຂອງການສືບທອດມູນມໍຣະດົກ

### ມາດຕາ 1. ມູນມໍຣະດົກ

ມູນມໍຣະດົກ ແມ່ນຊັບສົມບັດທຸກປະເພດລວມທັງສິດ ແລະ ພັນທະຕ່າງໆຂອງຜູ້ທີ່ເສັຽຊີວິດ ເວັ້ນເສັຽແຕ່ສິດ ແລະ ພັນທະຊຶ່ງກົດໝາຍ ຫລື ສັນຍາໄດ້ກຳນົດໄວ້ ໃຫ້ຜູ້ທີ່ເສັຽຊີວິດຕ້ອງໄດ້ປະຕິບັດດ້ວຍຕົນເອງ.

ໃນ ມູນມໍຣະດົກນັ້ນ ອາດຈະມີຊັບເດີມ ແລະ ສິນສົມສ້າງ.

ຊັບເດີມ ແມ່ນ ຊັບສົມບັດທີ່ຜົວ ຫລື ເມັຽໄດ້ມາກ່ອນການແຕ່ງດອງ ຫລື ແມ່ນຊັບສົມບັດທີ່ໄດ້ມາຈາກການສືບທອດມູນມໍຣະດົກ ຫລື ຈາກການມອບ ຫລື ການຍົກຊັບໃຫ້ຜົວ ຫລື ເມັຽສະເພາະພາຍຫລັງການແຕ່ງດອງ ແລະ ແມ່ນຊັບສົມບັດທີ່ຍັງຄົງຢູ່ ຫລື ປ່ຽນສະພາບໄປເປັນຊັບສິ່ງຂອງໃໝ່ແລ້ວ.

ສິນສົມສ້າງແມ່ນສົມບັດທີ່ຄູ່ຜົວເມັຽນັ້ນສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມັຽນຳກັນ ເວັ້ນເສັຽແຕ່ຊັບສິ່ງຂອງທີ່ເປັນເຄື່ອງໃຊ້ສ່ວນຕົວ ຊຶ່ງບໍ່ມີມູນຄ່າສູງ.

### ມາດຕາ 2. ການສືບທອດມູນມໍຣະດົກ

ການສືບທອດມູນມໍຣະດົກແມ່ນການຕົກທອດຂອງຊັບສົມບັດ, ສິດ ແລະ ພັນທະຂອງຜູ້ທີ່ເສັຍຊີວິດໃຫ້ແກ່ຜູ້ທີ່ມີສິດສືບທອດມູນມໍຣະດົກຕາມກົດໝາຍ ຫລື ຕາມພິໄນກຳ.

### ມາດຕາ 3. ມູນມໍຣະດົກຂອງຜູ້ຖືກສານຕັດສິນເປັນຜູ້ທີ່ເສັຽຊີວິດ

ເມື່ອບຸກຄົນໃດຫາກຖືກສານຕັດສິນວ່າ ເປັນຜູ້ທີ່ເສັຽຊີວິດໄປແລ້ວ ມູນມໍຣະດົກຂອງບຸກຄົນຜູ້ນັ້ນ ກໍຈະຕົກທອດເປັນຂອງຜູ້ທີ່ມີສິດສືບທອດ. ຖ້າວ່າພາຍຫລັງມາບຸກຄົນຜູ້ນັ້ນຫາກຍັງມີຊີວິດຢູ່ຜູ້ສືບທອດມູນມໍຣະດົກນັ້ນຕ້ອງສົ່ງຊັບທີ່ຕົນໄດ້ຮັບ ຫລື ສ່ວນຍັງເຫລືອຄືນໃຫ້ຜູ້ກ່ຽວ.

### ມາດຕາ 4. ວັນເວລາເປີດການສືບທອດມູນມໍລະດົກ.

ການເປີດການສືບທອດມູນມໍລະດົກແມ່ນເລີ່ມແຕ່ມື້ທີ່ເຈົ້າມູນມໍລະດົກໄດ້ເສັຽຊີວິດເປັນຕົ້ນໄປ. ໃນກໍລະນີທີ່ເຈົ້າມູນມໍລະດົກຫາກໄດ້ຖືກສານຕັດສິນວ່າເປັນຜູ້ທີ່ເສັຽຊີວິດແລ້ວນັ້ນ ກໍໃຫ້ຖືເອົາມື້ອອກຄໍາຕັດສິນຂອງສານເປັນມື້ເລີ່ມເປີດການສືບທອດມູນມໍລະດົກ.

### ມາດຕາ 5. ບ່ອນເປີດການສືບທອດມູນມໍລະດົກ

ບ່ອນເປີດການສືບທອດມູນມໍລະດົກແມ່ນບ່ອນຢູ່ປະຈໍາສຸດທ້າຍຂອງເຈົ້າມູນມໍລະດົກ, ຖ້າວ່າບ່ອນຢູ່ຂອງເຈົ້າມູນມໍລະດົກນັ້ນ ຫາກບໍ່ຈະແຈ້ງກໍໃຫ້ຖືເອົາບ່ອນມູນມໍລະດົກທີ່ເປັນພື້ນຖານສໍາຄັນຕັ້ງຢູ່ເປັນບ່ອນເປີດ.

ການເປີດການສືບທອດມູນມໍລະດົກຕ້ອງເຮັດຊ້ອງໜ້າພະນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ.

## ໝວດທີ 2 ຜູ້ສືບທອດມູນມໍລະດົກ

### ມາດຕາ 6. ຜູ້ສືບທອດມູນມໍລະດົກ

ຜູ້ສືບທອດມູນມໍລະດົກມີ: ລູກ (ລູກຄີງ, ລູກລ້ຽງ, ລູກນ້າ), ຜົວ ຫລື ເມັຽຂອງເຈົ້າ ມູນມໍລະດົກທີ່ຍັງມີຊີວິດຢູ່. ຖ້າວ່າເຈົ້າມູນມໍລະດົກຫາກບໍ່ມີລູກ, ບໍ່ມີຜົວ ຫລື ເມັຽແລ້ວຍາດພີ່ນ້ອງຂອງເຈົ້າມູນມໍລະດົກນັ້ນ ກໍຈະມີສິດສືບທອດມູນມໍລະດົກຕາມລໍາດັບດັ່ງຕໍ່ໄປນີ້:

1. ຍາດສາຍຕັ້ງ: ພໍ່ແມ່ ຫລື ປູ່ຍ່າ, ພໍ່ເຖົ້າ ແມ່ເຖົ້າ ຫລື ທວດ;

2. ຍາດພີ່ນ້ອງສາຍຂວາງ: ອ້າຍ, ເອື້ອຍ,ນ້ອງ ຫລື ລຸງປ້າ ອາວອາ, ນ້າບ່າວ, ນ້າສາວ ຫລື ຫລານ;

3. ລັດ ຫລື ນິຕິບຸກຄົນ ຫລື ບຸກຄົນອື່ນທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

ໃນການແບ່ງມູນມໍລະດົກນັ້ນ ຖ້າວ່າຜູ້ໃດຫາກເປັນຍາດຊັ້ນຈໍາກັບເຈົ້າມູນມໍລະດົກ ກໍຈະແມ່ນຜູ້ນັ້ນເປັນຜູ້ໄດ້ຮັບກ່ອນ. ສ່ວນຜູ້ທີ່ຢູ່ລໍາດັບຕໍ່ໄປນັ້ນຈະໄດ້ຮັບກໍຕໍ່ເມື່ອ ຫາກບໍ່ມີຍາດຊັ້ນຈໍາຂອງເຈົ້າມູນມໍລະດົກເທົ່ານັ້ນ.

## ໝວດທີ 3 ການເສັຽສິດສືບທອດມູນມໍລະດົກ

### ມາດຕາ 7. ການສໍ້ໂກງມູນມໍລະດົກ

ຜູ້ມີສິດສືບທອດມູນມໍລະດົກ ຊຶ່ງໄດ້ປິດບັງ, ໂຍກຍ້າຍມູນມໍລະດົກຫລາຍກ່ວາພູດທີ່ຕົນຈະໄດ້ຮັບນັ້ນກໍຈະບໍ່ໄດ້ມູນມໍລະດົກແຕ່ຢ່າງໃດເລີຍ. ແຕ່ຖ້າວ່າການສໍ້ໂກງ, ປິດບັງ, ໂຍກຍ້າຍນັ້ນ ຫາກໜ້ອຍກວ່າພູດຂອງຕົນທີ່ຈະໄດ້ຮັບແລ້ວກໍຈະບໍ່ໄດ້ຮັບພູດທີ່ຕົນຄວນໄດ້ຮັບນັ້ນຕື່ມອີກ.

ມາດຕານີ້ຈະບໍ່ມີຜົນບັງຄັບໃຊ້ຕໍ່ຜູ້ມີສິດສືບທອດມູນມໍລະດົກຕາມພິໄນກໍາ ຊຶ່ງເຈົ້າ ມູນມໍລະດົກໄດ້ເຮັດພິໄນກໍາຍົກຊັບສົມບັດນັ້ນໃຫ້ຜູ້ກ່ຽວແລ້ວ.

### ມາດຕາ 8. ການເສັຽສິດໃນການຮັບມູນມໍຣະດົກ

ພໍ່ແມ່ທີ່ຖືກຕັດຂາດຈາກຄວາມເປັນພໍ່ແມ່ຕາມຄຳຕັດສິນຂອງສານ ຈະບໍ່ມີສິດສືບທອດມູນມໍຣະດົກຂອງລູກ, ສ່ວນລູກນັ້ນກໍຈະບໍ່ມີສິດສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນດຽວກັນ.

ໃນກໍລະນີ ທີ່ພໍ່ແມ່ຫາກບໍ່ປະຕິບັດພັນທະໃນການລ້ຽງດູລູກຕາມຄຳຕັດສິນຂອງສານ ກໍຈະບໍ່ມີສິດສືບທອດມູນມໍຣະດົກຂອງລູກ. ສ່ວນລູກທີ່ເຖິງກະສຽນອາຍຸຫາກບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ຕາມຄຳຕັດສິນຂອງສານ ກໍຈະບໍ່ມີສິດສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນດຽວກັນ.

### ມາດຕາ 9. ຜູ້ເສັຽສິດສືບທອດມູນມໍຣະດົກ

ຜູ້ເສັຽສິດສືບທອດມູນມໍຣະດົກຕາມກົດຫມາຍ ຫລື ຕາມພິໄນກຳມີດັ່ງນີ້:

1. ຜູ້ທີ່ຖືກສານຕັດສິນວ່າ ໄດ້ມີເຈດຕະນາ ຫລື ພະຍາຍາມເຮັດໃຫ້ເຈົ້າມູນມໍຣະດົກ ຫລື ຜູ້ມີສິດສືບທອດມູນມໍຣະດົກຜູ້ໃດຜູ້ຫນຶ່ງເສັຽຊີວິດ ຫລື ບາດເຈັບສາຫັດ ເພື່ອຍາດຊີງເອົາມູນມໍຣະດົກ;
2. ຜູ້ທີ່ໄດ້ທຳລາຍ, ປິດບັງ ຫລື ປອມແປງພິໄນກຳທັງຫມົດ ຫລື ບາງສ່ວນ;
3. ຜູ້ທີ່ຢູ່ແຂວງ ຫລື ເມືອງດຽວກັນກັບຜູ້ທີ່ເສັຽຊີວິດ ເມື່ອຮູ້ຂ່າວການເສັຽຊີວິດແລ້ວຫາກບໍ່ມາມ້ຽນຄາບສິ່ງສະການ ຫລື ບໍ່ໄດ້ມອບຫມາຍໃຫ້ຄົນອື່ນມາຮ່ວມແທນຕົນໂດຍບໍ່ມີເຫດຜົນ;
4. ຜູ້ທີ່ໄດ້ຂົ່ມຂູ່ເຈົ້າມູນມໍຣະດົກໃຫ້ເຮັດ, ຖອນ ຫລື ປ່ຽນແປງພິໄນກຳທັງຫມົດ ຫລື ສ່ວນໃດສ່ວນຫນຶ່ງ;
5. ຜູ້ທີ່ໄດ້ປິດບັງ ຫລື ຊຸກເຊື່ອງຜູ້ກະທຳຜິດຕໍ່ຊີວິດ ຫລື ສຸຂະພາບຂອງເຈົ້າມູນມໍຣະດົກ ຊຶ່ງໃຫ້ໄດ້ຮັບບາດເຈັບສາຫັດ ຫລື ເສັຽອົງຄະ;
6. ຜູ້ທີ່ຖືກສານຕັດສິນວ່າໄດ້ຫາຄວາມບໍ່ຈິງໃສ່ເຈົ້າມູນມໍຣະດົກ ຫລື ໃສ່ຜູ້ມີສິດສືບທອດມູນມໍຣະດົກດ້ວຍກັນຕາມທີ່ໄດ້ບົ່ງໄວ້ໃນມາດຕາ 152 ຂອງກົດຫມາຍອາຍາ.

ບຸກຄົນທີ່ໄດ້ກ່າວມາເທິງນີ້ ຈະເສັຽສິດສືບທອດມູນມໍຣະດົກໄດ້ກໍຕໍ່ເມື່ອ ເຈົ້າມູນມໍຣະດົກຫາກໄດ້ສະແດງເຈດຈຳນົງຂອງຕົນ ອອກເປັນລາຍລັກອັກສອນເທົ່ານັ້ນ ເວັ້ນເສັຽແຕ່ເຈົ້າມູນມໍຣະດົກຫາກໄດ້ເສັຽຊີວິດຕາມທີ່ໄດ້ບົ່ງໄວ້ໃນຂໍ້ 1, 3 ແລະ 5 ຂອງມາດຕານີ້.

ເຈົ້າມູນມໍຣະດົກອາດຈະລຶບລ້າງການເສັຽສິດດັ່ງກ່າວນັ້ນກໍໄດ້ ແຕ່ຕ້ອງສະແດງເຈດຈຳນົງຂອງຕົນອອກເປັນລາຍລັກອັກສອນເຊັ່ນດຽວກັນ.

## ຫມວດທີ 4 ການຮັບ ແລະ ການສະລະມູນມໍຣະດົກ

### ມາດຕາ 10. ການຮັບມູນມໍຣະດົກ

ຜູ້ສືບທອດມູນມໍຣະດົກຕາມກົດຫມາຍ ຫລືຕາມພິໄນກຳທີ່ໄດ້ແຈ້ງເຈດຈຳນົງຂອງຕົນເພື່ອຮັບເອົາມູນມໍຣະດົກ ຕໍ່ສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ ບ່ອນທີ່ເປີດການສືບທອດນັ້ນແລ້ວ ກໍຈະຖືວ່າເປັນຜູ້ຮັບມູນມໍຣະດົກ.

ການຮັບເອົາມູນມໍຣະດົກນັ້ນ ຕ້ອງໃຫ້ເຮັດຂຶ້ນໃນໄລຍະ ຫົກເດືອນ ນັບແຕ່ມື້ທີ່ໄດ້ເປີດການສືບທອດມູນມໍຣະດົກເປັນຕົ້ນໄປ.

ໃນກໍລະນີທີ່ຜູ້ສືບທອດມູນມໍຣະດົກຜູ້ໃດຜູ້ໜຶ່ງຫາກໄດ້ສະລະມູນມໍຣະດົກ ຜູ້ທີ່ຈະຮັບມູນມໍຣະດົກຊຶ່ງເປັນພູດຂອງຜູ້ສະລະນັ້ນຕ້ອງສະແດງເຈດຈຳນົງຂອງຕົນວ່າ ຈະຮັບເອົາມູນມໍຣະດົກດັ່ງກ່າວພາຍໃນໄລຍະເວລາທີ່ຍັງເຫລືອ. ຖ້າວ່າກຳນົດເວລາທີ່ຍັງເຫລືອນັ້ນຫາກຫລຸດ ສາມເດືອນ ຜູ້ທີ່ຈະຮັບນັ້ນມີສິດຮ້ອງຂໍຕໍ່ສານໃຫ້ຍືດເວລາອອກຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນ ສາມເດືອນ.

ສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານຕ້ອງອອກໃບຢັ້ງຢືນການຮັບມູນມໍຣະດົກໃຫ້ແກ່ຜູ້ສືບທອດໄວ້ເພື່ອເປັນຫລັກຖານ.

### ມາດຕາ 11. ມູນມໍຣະດົກທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາ

ມູນມໍຣະດົກທີ່ຍັງຄົງເປັນວັດຖຸເດີມ ຊຶ່ງຕົກເປັນພູດຂອງຜູ້ສືບທອດມູນມໍຣະດົກຜູ້ໃດຜູ້ໜຶ່ງທີ່ບໍ່ໄດ້ຮັບເອົາພາຍໃນກຳນົດເວລາດັ່ງກ່າວໄວ້ໃນວັກທີ 2 ຂອງມາດຕາ 10 ເທິງນີ້ ແຕ່ມູນມໍຣະດົກດັ່ງກ່າວນັ້ນພັດມີຜູ້ສືບທອດມູນມໍຣະດົກຜູ້ອື່ນຮັບເອົາ ຫລື ໄດ້ມອບໃຫ້ແກ່ລັດແລ້ວ ມູນມໍຣະດົກທັງໝົດນີ້ຈະສົ່ງຄືນໃຫ້ແກ່ຜູ້ສືບທອດມູນມໍຣະດົກທີ່ບໍ່ມາຮັບເອົານັ້ນໄດ້ກໍຕໍ່ເມື່ອຜູ້ກ່ຽວຫາກໄດ້ຮັບຄວາມຍິນຍອມຈາກຜູ້ສືບທອດມູນມໍຣະດົກທີ່ໄດ້ຮັບເອົາມູນມໍຣະດົກເທົ່ານັ້ນ. ຖ້າຫາກບໍ່ໄດ້ຮັບຄວາມຍິນຍອມແລ້ວ ສານຈະເປັນຜູ້ຕັດສິນໃຫ້ ໃນເມື່ອຜູ້ກ່ຽວຫາກມີເຫດຜົນພຽງພໍ.

ໃນກໍລະນີທີ່ຜູ້ມີສິດສືບທອດມູນມໍຣະດົກ ຕາມກົດໝາຍ ຫລື ຕາມພິໄນກຳໄດ້ເສັຽຊີວິດພາຍຫລັງທີ່ໄດ້ເປີດການສືບທອດມູນມໍຣະດົກແລ້ວ ແຕ່ຫາກຍັງບໍ່ທັນໄດ້ຮັບເອົາມູນມໍຣະດົກ ທີ່ຕົກເປັນພູດຂອງຜູ້ກ່ຽວຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນວັກທີ 2 ຂອງມາດຕາ10 ເທິງນີ້ກໍໃຫ້ຜູ້ສືບທອດມູນມໍຣະດົກຂອງຜູ້ກ່ຽວເປັນຜູ້ມີສິດຮັບເອົາມູນມໍຣະດົກນັ້ນ.

### ມາດຕາ 12. ຂອບເຂດສິດໃນການຊື້ຂາດມູນມໍຣະດົກ

ກ່ອນການເປີດການສືບທອດມູນມໍຣະດົກ ຫລື ກ່ອນການຮັບໃບຢັ້ງຢືນການຮັບມູນມໍຣະດົກນັ້ນ ຖ້າວ່າຜູ້ສືບທອດມູນມໍຣະດົກຜູ້ອື່ນຫາກຍັງບໍ່ທັນໄດ້ເຂົ້າຮ່ວມ ໃນການຮັບເອົາມູນມໍຣະດົກແລ້ວ ຜູ້ປົກຄອງ ຫລື ຜູ້ສືບທອດທີ່ໄດ້ຄອບຄອງມູນມໍຣະດົກ ຈະບໍ່ມີສິດຊື້ຂາດມູນມໍຣະດົກດັ່ງກ່າວເວັ້ນເສັຽແຕ່ໃນກໍລະນີທີ່ໄດ້ໃຊ້ຈ່າຍເພື່ອ:

1. ປິ່ນປົວ ເບິ່ງແຍງ ຫລື ມັຽນຄາບສົ່ງສະການເຈົ້າມູນມໍຣະດົກ;
2. ເບິ່ງແຍງລ້ຽງດູບຸກຄົນທີ່ຢູ່ພາຍໃຕ້ການອຸປະການະຂອງເຈົ້າມູນມໍຣະດົກ;
3. ຊຳລະຄ່າແຮງງານແລະ ອື່ນໆທີ່ຕົກເປັນພັນທະຂອງເຈົ້າມູນມໍຣະດົກ;
4. ປົກປັກຮັກສາ ແລະ ຄຸ້ມຄອງມູນມໍຣະດົກ.

### ມາດຕາ 13. ການສະລະມູນມໍຣະດົກ

ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ຫລື ຕາມພິໄນກຳມີສິດສະລະມູນມໍຣະດົກໃນໄລຍະ ຫົກເດືອນ ນັບແຕ່ມື້ທີ່ໄດ້ເປີດການສືບທອດມູນມໍຣະດົກເປັນຕົ້ນໄປ.

ຜູ້ສະລະມູນມໍຣະດົກ ຕ້ອງສະແດງເຈດຈຳນົງຂອງຕົນອອກເປັນລາຍລັກອັກສອນ ໄວ້ໃນສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ ໂດຍບອກຊື່ຂອງບຸກຄົນ ຫລື ອົງການຈັດຕັ້ງທີ່ຕົນສະ

ລະໃຫ້. ໃນກໍລະນີທີ່ບໍ່ໄດ້ບົ່ງຊື່ບຸກຄົນ ຫລື ອົງການຈັດຕັ້ງແລ້ວ ມູນມໍຣະດົກນັ້ນກໍຈະຕົກທອດເປັນຂອງຜູ້ສືບທອດຜູ້ອື່ນຕາມກົດໝາຍ.

ຜູ້ທີ່ໄດ້ສະລະພູດມູນມໍຣະດົກຂອງຕົນ ແລະ ຜູ້ສືບທອດຂອງຜູ້ກ່ຽວບໍ່ມີສິດທວງເອົາມູນມໍຣະດົກທີ່ໄດ້ສະລະແລ້ວນັ້ນຄືນ.

### ມາດຕາ 14. ການສະລະມູນມໍຣະດົກຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ແລະ ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

ຜູ້ສືບທອດມູນມໍຣະດົກທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດຈະສະລະມູນມໍຣະດົກບໍ່ໄດ້ເວັ້ນເສັຽແຕ່ໄດ້ຮັບຄວາມຍິນຍອມຂອງພໍ່ ແມ່ ຫລື ຜູ້ປົກຄອງເທົ່ານັ້ນ.

## ພາກທີ II ວ່າດ້ວຍສິດສືບທອດມູນມໍຣະດົກຕາມກົດໝາຍ

### ໝວດທີ 1 ການແບ່ງປັນມູນມໍຣະດົກລະຫວ່າງບັນດາຜູ້ສືບທອດຕາມກົດໝາຍ

### ມາດຕາ 15. ກໍລະນີທີ່ພາໃຫ້ມີການສືບທອດມູນມໍຣະດົກຕາມກົດໝາຍ

ການສືບທອດມູນມໍຣະດົກຕາມກົດໝາຍຈະມີຂຶ້ນໄດ້ໃນກໍລະນີ:

1. ມູນມໍຣະດົກທີ່ບໍ່ໄດ້ເຮັດພິໄນກຳມອບໃຫ້ບຸກຄົນໃດບຸກຄົນໜຶ່ງສືບທອດ;
2. ພິໄນກຳເປັນໂມຄະ ຫລື ຜູ້ສືບທອດມູນມໍຣະດົກຕາມພິໄນກຳນັ້ນໄດ້ເສັຽຊີວິດກ່ອນການເປີດການສືບທອດ;
3. ຜູ້ສືບທອດມູນມໍຣະດົກຕາມພິໄນກຳນັ້ນຫາກບໍ່ຮັບເອົາການສືບ ທອດ;
4. ມູນມໍຣະດົກທີ່ຍັງເຫລືອຈາກການສືບທອດຕາມພິໄນກຳ.

### ມາດຕາ 16. ການແບ່ງປັນມູນມໍຣະດົກລະຫວ່າງ ຜົວ ຫລື ເມັຽທີ່ຍັງມີຊີວິດຢູ່ ແລະ ລູກ

ໃນກໍລະນີທີ່ຜົວ ຫລື ເມັຽຫາກໄດ້ເສັຽຊີວິດໄປໂດຍໄດ້ປະເມັຽ ຫລື ຜົວ ແລະ ລູກໄວ້ ກໍແມ່ນລູກເປັນຜູ້ມີສິດຮັບມູນມໍຣະດົກທີ່ເປັນຊັບເດີມຂອງຜູ້ທີ່ເສັຽຊີວິດ. ສ່ວນສິນສົມສ້າງນັ້ນໃຫ້ແບ່ງເຄິ່ງ, ເຄິ່ງໜຶ່ງໃຫ້ເມັຽ ຫລື ຜົວທີ່ຍັງມີຊີວິດຢູ່ ແລະ ອີກເຄິ່ງໜຶ່ງນັ້ນມອບໃຫ້ແກ່ພວກລູກແບ່ງປັນເປັນພູດສະເໝີກັນ.

ເມັຽ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນ ມີສິດຄຸ້ມຄອງຊັບທີ່ຕົກທອດເປັນຂອງລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ.

### ມາດຕາ 17. ການແບ່ງປັນມູນມໍຣະດົກລະຫວ່າງ ຜົວ ຫລື ເມັຽທີ່ຍັງມີຊີວິດຢູ່ ແລະ ຍາດສາຍຕັ້ງ

ໃນກໍລະນີທີ່ຜົວ ຫລື ເມັຽຊຶ່ງບໍ່ມີລູກຫາກໄດ້ເສັຽຊີວິດໄປຍັງເຫລືອແຕ່ເມັຽ ຫລື ຜົວ ແລະຍາດສາຍຕັ້ງ ການແບ່ງປັນມູນມໍຣະດົກໃຫ້ປະຕິບັດດັ່ງນີ້:

1. ຍາດສາຍຕັ້ງຈະໄດ້ຮັບມູນມໍຣະດົກທີ່ເປັນຊັບເດີມຂອງຜູ້ທີ່ເສັຽຊີວິດທັງໝົດ ຕາມລຳດັບໃກ້ຊິດກັບຜູ້ທີ່ເສັຽຊີວິດໂດຍແບ່ງປັນເປັນພູດສະເໝີກັນ;

2. ເມັຽ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນຈະໄດ້ຮັບແຕ່ສ່ວນສິນສົມສ້າງທັງໝົດ ຊຶ່ງຕົກເປັນຂອງຜູ້ທີ່ເສັຽຊີວິດເທົ່ານັ້ນ.

## ມາດຕາ 18. ການແບ່ງປັນມູນມໍຣະດົກລະຫວ່າງຍາດພີ່ນ້ອງສາຍຂວາງ

ຖ້າວ່າຜູ້ທີ່ເສັຽຊີວິດຫາກບໍ່ມີລູກ ແລະ ບໍ່ມີຍາດສາຍຕັ້ງ ແຕ່ຫາກຍັງມີຜົວ ຫລື ເມັຽນັ້ນຍາດພີ່ນ້ອງສາຍຂວາງ ຈະໄດ້ຮັບມູນມໍຣະດົກທີ່ເປັນຊັບເດີມຂອງຜູ້ເສັຽຊີວິດແຕ່ເຄິ່ງໜຶ່ງເທົ່ານັ້ນ ສ່ວນອີກເຄິ່ງໜຶ່ງ ແລະ ສິນສົມສ້າງທັງໝົດນັ້ນ ຈະຕົກເປັນຂອງເມັຽ ຫລື ຜົວ ທີ່ຍັງມີຊີວິດຢູ່.

ການແບ່ງປັນມູນມໍຣະດົກລະຫວ່າງຍາດພີ່ນ້ອງສາຍຂວາງນັ້ນ ໃຫ້ແບ່ງປັນເປັນພູດສະເໝີກັນ.

## ມາດຕາ 19. ການແບ່ງປັນມູນມໍຣະດົກລະຫວ່າງພວກລູກຂອງຜູ້ທີ່ເສັຽຊີວິດ

ການແບ່ງປັນມູນມໍຣະດົກ ລະຫວ່າງພວກລູກຂອງຜູ້ທີ່ເສັຽຊີວິດໃຫ້ປະຕິບັດດັ່ງນີ້:

1. ຖ້າວ່າຜູ້ທີ່ເສັຽຊີວິດຫາກມີແຕ່ລູກຄີງເທົ່ານັ້ນ ມູນມໍຣະດົກທີ່ຕົກທອດແກ່ພວກກ່ຽວກໍໃຫ້ແບ່ງປັນເປັນພູດສະເໝີກັນ.

2. ຖ້າວ່າຜູ້ເສັຽຊີວິດຫາກມີລູກຄີງ, ລູກລ້ຽງ, ລູກນ້າ ພວກລູກລ້ຽງ ແລະ ລູກນ້າກໍຈະໄດ້ຮັບພູດເທົ່າທຽມກັນກັບລູກຄີງ.

ບໍ່ວ່າໃນກໍລະນີໃດ ລູກນ້າ ຈະໄດ້ຮັບພຽງແຕ່ມູນມໍຣະດົກທີ່ເປັນສິນສົມສ້າງຂອງຜູ້ທີ່ເສັຽຊີວິດເທົ່ານັ້ນ.

3. ລູກລ້ຽງ ຈະບໍ່ມີສິດສືບທອດມູນມໍຣະດົກຂອງຜູ້ເປັນພໍ່ແມ່ເດີມຂອງຕົນອີກ;

4. ຖ້າວ່າພວກລູກທີ່ໄດ້ກ່າວມາຂ້າງເທິງນີ້ ຫາກໄດ້ປະພຶດຕົນບໍ່ຊອບທຳ, ບໍ່ຍອມຢູ່ໃຕ້ການຄຸ້ມຄອງຂອງພໍ່ແມ່, ບໍ່ໄດ້ເບິ່ງແຍງພໍ່ແມ່ໃນເວລາເຖົ້າແກ່ ຫລື ເຈັບເປັນທັງໆທີ່ວ່າຕົນມີຄວາມອາດສາມາດຢູ່ແລ້ວ ກໍຈະຖືວ່າເປັນຜູ້ເສັຽສິດສືບທອດມູນມໍຣະດົກ ແລະ ຈະໄດ້ປະຕິບັດດັ່ງດຽວກັນກັບວັກທີ 2 ຂອງມາດຕາ 9 ຂອງກົດໝາຍສະບັບນີ້.

## ມາດຕາ 20. ສິດໃນການຮັບມູນມໍຣະດົກ ຊຶ່ງເປັນຂອງລູກທີ່ຍັງຢູ່ໃນທ້ອງຂອງຜູ້ເປັນແມ່

ລູກຂອງເຈົ້າມູນມໍຣະດົກທີ່ຍັງຢູ່ໃນທ້ອງຂອງຜູ້ເປັນແມ່ ກໍມີສິດຮັບສ່ວນແບ່ງປັນເຊັ່ນດຽວກັນ.

## ມາດຕາ 21. ການສືບທອດມູນມໍຣະດົກ ລະຫວ່າງ ຫົວໜ້າຄອບຄົວ ແລະ ຜູ້ຮັບໃຊ້

ຖ້າວ່າຫົວໜ້າຄອບຄົວຫາກໄດ້ເສັຽຊີວິດ ໂດຍບໍ່ມີຜູ້ສືບທອດມູນມໍຣະດົກແລ້ວ ຜູ້ຮັບໃຊ້ທີ່ຢູ່ໃນຄອບຄົວນັ້ນ ແຕ່ສາມປີຂຶ້ນໄປ ຊຶ່ງໄດ້ເບິ່ງແຍງຢ້າວເຮືອນ ແລະ ປິ່ນປົວໃນເວລາຜູ້ກ່ຽວເຈັບເປັນກໍຈະໄດ້ສືບທອດມູນມໍຣະດົກນັ້ນ.

ຖ້າວ່າຜູ້ຮັບໃຊ້ຫາກໄດ້ເສັຽຊີວິດໂດຍບໍ່ມີຜູ້ສືບທອດມູນມໍຣະດົກ ທີ່ວຫນ້າຄອບຄົວກໍຈະໄດ້ສືບທອດມູນມໍຣະດົກຂອງຜູ້ຮັບໃຊ້ເຊັ່ນດຽວກັນ.

### ມາດຕາ 22. ມູນມໍຣະດົກທີ່ບໍ່ມີຜູ້ສືບທອດ

ເມື່ອບຸກຄົນຜູ້ໃດຜູ້ຫນຶ່ງຫາກໄດ້ເສັຽຊີວິດ ໂດຍບໍ່ມີຜູ້ສືບທອດມູນມໍຣະດົກ ຫລື ບໍ່ຮູ້ວ່າຜູ້ສືບທອດນັ້ນຢູ່ໃສພາຍໃນກໍານົດ ຫົກເດືອນ ຫາກບໍ່ມີຜູ້ໃດມາທວງຫາວເອົາແລ້ວ ມູນມໍຣະດົກທັງຫມົດນັ້ນຈະແມ່ນລັດເປັນຜູ້ຄຸ້ມຄອງໄວ້.

ຖ້າຫາກຫມົດອາຍຸຄວາມໃນການຮ້ອງຟ້ອງຕາມທີ່ໄດ້ບົ່ງໄວ້ໃນມາດຕາ 30 ຂອງກົດຫມາຍສະບັບນີ້ແລ້ວ ມູນມໍຣະດົກດັ່ງກ່າວກໍຈະຕົກເປັນກໍາມະສິດຂອງລັດ.

ສໍານັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ ທີ່ໄດ້ເຂົ້າຮ່ວມໃນການເປີດການສືບທອດມູນມໍຣະດົກນັ້ນ ເປັນຜູ້ກໍານົດເອົາຊັບຂອງຜູ້ທີ່ເສັຽຊີວິດນັ້ນສ່ວນໃດສ່ວນຫນຶ່ງ ເພື່ອໄປໃຊ້ຈ່າຍໃນການມັຽນຄາບສິ່ງສະການ ແລະ ຊໍາລະໜີ້ສິນຂອງຜູ້ທີ່ເສັຽຊີວິດ.

### ມາດຕາ 23. ມູນມໍຣະດົກຂອງພິກຂຸ, ສາມະເນນ

ເມື່ອພິກຂຸ, ສາມະເນນອົງໃດຫາກໄດ້ເສັຽຊີວິດໄປໂດຍບໍ່ມີຜູ້ສືບທອດມູນມໍຣະດົກ ຫລື ບໍ່ໄດ້ມອບຊັບຢ່າງໃດຢ່າງຫນຶ່ງໃຫ້ບຸກຄົນ ຫລື ອົງການຈັດຕັ້ງໃດຫນຶ່ງແລ້ວ ຊັບນັ້ນກໍຈະຕົກເປັນຂອງວັດທັງຫມົດ.

### ມາດຕາ 24. ສິດສືບທອດມູນມໍຣະດົກຂອງ ຜົວ ເມັຽທີ່ແຍກກັນຢູ່

ຜົວເມັຽຄູ່ໃດທີ່ໄດ້ແຍກກັນຢູ່ຕ່າງຫາກ ແຕ່ຍັງບໍ່ທັນໄດ້ຢ່າຮ້າງກັນໂດຍຖືກຕ້ອງຕາມກົດໝາຍນັ້ນ ກໍຍັງມີສິດສືບທອດມູນມໍຣະດົກຂອງກັນ ແລະ ກັນໄດ້ຢູ່.

## ຫມວດທີ 2 ການສືບທອດມູນມໍຣະດົກແທນທີ່ກັນ

### ມາດຕາ 25. ຜູ້ສືບທອດມູນມໍຣະດົກແທນທີ່ກັນ

ເມື່ອບຸກຄົນຜູ້ທີ່ເປັນຜູ້ສືບທອດມູນມໍຣະດົກຕາມກົດຫມາຍຫາກໄດ້ເສັຽຊີວິດກ່ອນເຈົ້າມູນມໍຣະດົກແລ້ວ ຜູ້ສືບທອດຂອງບຸກຄົນຜູ້ນັ້ນກໍມີສິດສືບທອດມູນມໍຣະດົກແທນຜູ້ກ່ຽວຕາມລໍາດັບ. ເມື່ອຜູ້ສືບທອດມູນມໍຣະດົກແທນທີ່ຜູ້ນີ້ຫາກໄດ້ເສັຽຊີວິດກໍໃຫ້ຜູ້ສືບທອດຜູ້ຕໍ່ໄປໄດ້ຮັບມູນມໍຣະດົກແທນທີ່ກັນ ແລະ ຕໍ່ໆໄປ.

### ມາດຕາ 26. ເງື່ອນໄຂຂອງການສືບທອດມູນມໍຣະດົກແທນທີ່ກັນ

ຜູ້ສືບທອດມູນມໍຣະດົກແທນທີ່ກັນ:

ຕ້ອງເປັນຜູ້ສືບທອດມູນມໍຣະດົກຕາມກົດຫມາຍ;

ຕ້ອງເປັນລູກຂອງບຸກຄົນທີ່ມີສິດສືບທອດມູນມໍຣະດົກ ຊຶ່ງໄດ້ເສັຽຊີວິດ.

### ມາດຕາ 27. ສິດຂອງຜູ້ສະລະມູນມໍລະດົກ

ບຸກຄົນຜູ້ໃດຫາກໄດ້ສະລະມູນມໍລະດົກ ທີ່ຕົກເປັນພູດຂອງຕົນໃຫ້ຜູ້ອື່ນແລ້ວ ກໍຍັງມີສິດຮັບມູນມໍລະດົກແທນທີ່ກັນຢູ່.

## ໝວດທີ 3 ການຮ້ອງຂໍແບ່ງປັນມູນມໍລະດົກ

### ມາດຕາ 28. ການສະເໜີແບ່ງປັນມູນມໍລະດົກ

ຜູ້ສືບທອດມູນມໍລະດົກຜູ້ໃດຜູ້ໜຶ່ງ ຈະຂໍແບ່ງປັນມູນມໍລະດົກກໍໄດ້ ເວັ້ນເສັຽແຕ່ມີສັນຍາທີ່ບົ່ງໄວ້ຢ່າງອື່ນ.

ຖ້າຫາກມີຜູ້ສືບທອດມູນມໍລະດົກຜູ້ໃດຜູ້ໜຶ່ງ ທີ່ຍັງບໍ່ທັນເຖິງກະສຽນອາຍຸແລ້ວ ການແບ່ງປັນມູນມໍລະດົກອາດຈະຍືດເວລາອອກໄປຈົນກວ່າຜູ້ກ່ຽວຈະເຖິງກະສຽນອາຍຸກໍໄດ້ ຫລື ຖ້າຫາກເຫັນວ່າມີຄວາມຈຳເປັນຈະແບ່ງປັນມູນມໍລະດົກໃນເວລານັ້ນກໍຕ້ອງໃຫ້ສານເປັນຜູ້ແບ່ງປັນ.

ໃນກໍລະນີໃດກໍຕາມ ຖ້າວ່າຄູ່ຜົວເມັຽ ຜູ້ໃດຜູ້ໜຶ່ງ ຫາກເສັຽຊີວິດ ແລະ ຜູ້ຍັງມີຊີວິດຢູ່ນັ້ນໄດ້ເອົາຜົວ ຫລື ເມັຽໃໝ່ແລ້ວ ພວກລູກຈະຂໍແບ່ງປັນມູນມໍລະດົກນັ້ນກໍໄດ້.

### ມາດຕາ 29. ການເຮັດບັນຊີມູນມໍລະດົກ

ກ່ອນການແບ່ງປັນມູນມໍລະດົກຕ້ອງເຮັດບັນຊີຊັບສົມບັດຕ່າງໆຂອງເຈົ້າມູນມໍລະດົກດັ່ງນີ້:

1. ຊັບສົມບັດ ຊຶ່ງເຈົ້າມູນມໍລະດົກໄດ້ເອົາໃຫ້ຜູ້ອື່ນຢືມ, ຝາກ ຫລື ຊວດຈຳ. ຖືກຜູ້ອື່ນສໍ້ໂກງ, ປິດບັງ, ຍັກຍອກເອົາກ່ອນການເສັຽຊີວິດ;

2. ການໃຊ້ຈ່າຍຄ່າມັຽນຄາບສິ່ງສະການ ແລະ ໜີ້ສິນອື່ນໆຂອງເຈົ້າມູນມໍລະດົກ.

ພາຍຫລັງທີ່ໄດ້ຊຳລະສະສາງບັນຊີລາຍຮັບ-ລາຍຈ່າຍສຳເລັດແລ້ວ ພວກສືບທອດມູນມໍລະດົກຈຶ່ງແບ່ງປັນຊັບດັ່ງກ່າວຕາມພູດຂອງໃຜລາວ.

### ມາດຕາ 30. ອາຍຸຄວາມໃນການຮ້ອງຟ້ອງເອົາມູນມໍລະດົກ

ການຮ້ອງຟ້ອງເອົາມູນມໍລະດົກ ສາມາດເຮັດຂຶ້ນໄດ້ພາຍໃນກຳນົດ ສາມປີ ນັບແຕ່ມື້ທີ່ເຈົ້າມູນມໍລະດົກໄດ້ເສັຽຊີວິດ ຫລື ນັບແຕ່ມື້ທີ່ຜູ້ສືບທອດມູນມໍລະດົກໄດ້ຮູ້ ແລະ ຄວນຮູ້ວ່າ ເຈົ້າມູນມໍລະດົກໄດ້ເສັຽຊີວິດ. ຖ້າວ່າກາຍກຳນົດນີ້ແລ້ວ ສິດໃນການຮ້ອງຟ້ອງກໍຈະຕົກໄປ ເວັ້ນເສັຽແຕ່ຫາກມີເຫດຜົນພຽງພໍ.

### ມາດຕາ 31. ການແບ່ງປັນມູນມໍລະດົກທີ່ຢູ່ໃນການຄອບຄອງຂອງຜູ້ສືບທອດຜູ້ໃດຜູ້ໜຶ່ງ

ຜູ້ສືບທອດມູນມໍລະດົກທີ່ໄດ້ຄອບຄອງມູນມໍລະດົກ ຊຶ່ງຍັງບໍ່ທັນໄດ້ແບ່ງປັນນັ້ນ ມີສິດຮ້ອງຂໍໃຫ້ແບ່ງປັນມູນມໍລະດົກດັ່ງກ່າວໄດ້ທຸກເວລາ ເຖິງວ່າອາຍຸຄວາມທີ່ໄດ້ກ່າວໄວ້ໃນມາດຕາ 30 ຂອງກົດໝາຍສະບັບນີ້ຈະໝົດແລ້ວກໍຕາມ.

พาກທີ III ວ່າດ້ວຍສິດສືບທອດມູນມໍຣະດົກຕາມພິໄນກຳ

## ໝວດທີ 1ການເຮັດພິໄນກຳ

### ມາດຕາ 32. ສິດໃນການມອບ ຫລື ເຮັດພິໄນກຳ

ພົນລະເມືອງທຸກຄົນມີສິດມອບ ຫລື ຍົກຊັບ ຫລື ເຮັດພິໄນກຳ ມອບຊັບສົມບັດຂອງຕົນໃຫ້ບຸກຄົນໃດບຸກຄົນໜຶ່ງ ຫລື ໃຫ້ຫລາຍຄົນ, ໃຫ້ອົງການຈັດຕັ້ງຂອງລັດ, ລວມໝູ່ ແລະ ອົງການຈັດຕັ້ງສັງຄົມອື່ນຕາມເຈດຈຳນົງຂອງຕົນກ່ອນເສັຽຊີວິດ.

ການມອບຊັບ ແມ່ນ ການເອົາຊັບຂອງຕົນໃຫ້ບຸກຄົນອື່ນໂດຍບໍ່ມີເງື່ອນໄຂໃນເວລາຍັງມີຊີວິດຢູ່. ຜູ້ຮັບຊັບນັ້ນຈະກາຍເປັນເຈົ້າກຳມະສິດນັບແຕ່ເວລາທີ່ໄດ້ຮັບຊັບເປັນຕົ້ນໄປ.

ການຍົກຊັບ ແມ່ນ ການເອົາຊັບຂອງຕົນໃຫ້ບຸກຄົນອື່ນໂດຍມີເງື່ອນໄຂໃນເວລາຍັງມີຊີວິດຢູ່. ຜູ້ຮັບຊັບນັ້ນຈະກາຍເປັນເຈົ້າກຳມະສິດໄດ້ກໍ່ຕໍ່ເມື່ອຜູ້ກ່ຽວ ຫາກໄດ້ປະຕິບັດຕາມເງື່ອນໄຂທີ່ໄດ້ຕົກລົງກັນກັບຜູ້ຍົກຊັບໂດຍສຳເລັດ.

### ມາດຕາ 33. ຂອບເຂດສິດໃນການມອບ ຫລື ຍົກຊັບ ຫລື ເຮັດພິໄນກຳ

ເມື່ອຕົນຍັງມີຊີວິດຢູ່ເຈົ້າມູນມໍຣະດົກ ບໍ່ມີສິດມອບ ຫລື ຍົກຊັບໂດຍໜັງສືມອບ, ຍົກຊັບ ຫລື ໂດຍພິໄນກຳ ມອບຊັບທັງໝົດຂອງຕົນໃຫ້ລູກຜູ້ໃດຜູ້ໜຶ່ງ ຫລື ບຸກຄົນອື່ນ ຖ້າວ່າຜູ້ກ່ຽວຫາກມີລູກສືບທອດຢູ່.

ການມອບ ຫລື ການຍົກຊັບ ຫລື ເຮັດພິໄນກຳ ໃຫ້ປະຕິບັດດັ່ງນີ້:

1. ຖ້າວ່າເຈົ້າມູນມໍຣະດົກຫາກມີລູກຜູ້ໜຶ່ງ ແມ່ນ ບໍ່ໃຫ້ກາຍເຄິ່ງໜຶ່ງຂອງຊັບທັງໝົດ;
2. ຖ້າວ່າເຈົ້າມູນມໍຣະດົກ ຫາກມີລູກສອງຄົນ ແມ່ນ ບໍ່ໃຫ້ກາຍໜຶ່ງສ່ວນສາມຂອງຊັບທັງໝົດ;
3. ຖ້າວ່າເຈົ້າມູນມໍຣະດົກ ຫາກມີລູກສາມຄົນຂຶ້ນໄປ ແມ່ນ ບໍ່ໃຫ້ກາຍໜຶ່ງສ່ວນສີ່ຂອງຊັບທັງໝົດ.

### ມາດຕາ 34. ພິໄນກຳເປັນລາຍລັກອັກສອນ

ການເຮັດພິໄນກຳເປັນລາຍລັກອັກສອນ ອາດຈະຂຽນດ້ວຍເຈົ້າມູນມໍຣະດົກເອງ. ຖ້າຫາກຜູ້ອື່ນຂຽນໃຫ້ກໍຕ້ອງມີພະຍານຢ່າງໜ້ອຍ ສາມຄົນເຂົ້າຮ່ວມນຳ ແຕ່ຕ້ອງຮັກສາຄວາມລັບໄວ້ຈົນກວ່າຈະມີການເປີດການສືບທອດມູນມໍຣະດົກ.

ໃນພິໄນກຳນັ້ນ ຕ້ອງບອກສະຖານທີ່, ວັນ, ເດືອນ, ປີ ເຮັດພິໄນກຳ, ປະເພດ ແລະ ຈຳນວນຊັບທີ່ຈະມອບ, ຊື່ ແລະ ນາມສະກຸນຂອງຜູ້ມອບ ແລະ ຜູ້ຮັບ, ຜູ້ຂຽນ ແລະ ຂອງພະຍານ.

ຜູ້ມອບ, ຜູ້ຂຽນ ແລະ ພະຍານຕ້ອງລົງລາຍເຊັນ ຫລື ແປະໂປ້ມືໃສ່ພິໄນກຳ.

ພິໄນກຳນັ້ນ ຫລັງຈາກເຮັດແລ້ວຕ້ອງໃສ່ຊອງຕິດຄັ່ງ ແລ້ວນຳໄປຂຶ້ນທະບຽນທີ່ສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ ບ່ອນເຈົ້າມູນມໍຣະດົກຢູ່.

### ມາດຕາ 35. ພິໄນກຳທາງປາກເປົ່າ

ບຸກຄົນຜູ້ໃດທີ່ບໍ່ສາມາດເຮັດພິໄນກຳເປັນລາຍລັກອັກສອນໄດ້ຍ້ອນຕົກຢູ່ໃນສະພາບອັນຕະລາຍທີ່ໃກ້ຈະເສັຽຊີວິດ ຫລື ຍ້ອນສຸຂະພາບອ່ອນເພັຽ ຫລື ຍ້ອນສາເຫດອື່ນໆ ບຸກຄົນຜູ້ນັ້ນຈະເຮັດພິໄນກຳທາງປາກເປົ່າກໍໄດ້ ໂດຍຊ້ອງໜ້າພະຍານຢ່າງໜ້ອຍ ສາມຄົນ.

ພະຍານດັ່ງກ່າວຕ້ອງແຈ້ງຂໍ້ຄວາມທີ່ເຈົ້າມູນມໍຣະດົກ ໄດ້ສັ່ງໄວ້ຕໍ່ສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານໃນທັນໃດ ແລະ ຊີ້ແຈງສາເຫດທີ່ພາໃຫ້ບຸກຄົນນັ້ນບໍ່ສາມາດເຮັດພິໄນກຳເປັນລາຍລັກອັກສອນໄດ້.

ພິໄນກຳທາງປາກເປົ່ານັ້ນຈະບໍ່ມີຜົນບັງຄັບໃຊ້ໄດ້ ຖ້າຫາກກາຍກຳນົດ ໜຶ່ງເດືອນ ນັບແຕ່ເວລາທີ່ເຈົ້າມູນມໍຣະດົກໄດ້ກັບຄືນສູ່ສະພາບປົກກະຕິ.

### ມາດຕາ 36. ຜູ້ສືບທອດສຳຮອງ

ເຈົ້າມູນມໍຣະດົກມີສິດກຳນົດຜູ້ສືບທອດສຳຮອງ ເພື່ອແທນທີ່ຜູ້ສືບທອດມູນມໍຣະດົກຊຶ່ງຕົນໄດ້ກຳນົດໄວ້ກ່ອນນັ້ນ ໃນກໍລະນີທີ່ຜູ້ສືບທອດຜູ້ນີ້ຫາກໄດ້ເສັຽຊີວິດ ກ່ອນການເປີດພິໄນກຳ ຫລື ບໍ່ຮັບເອົາມູນມໍຣະດົກ.

### ມາດຕາ 37. ສິດຂອງຜູ້ສືບທອດມູນມໍຣະດົກຕາມພິໄນກຳ

ຖ້າວ່າເຈົ້າມູນມໍຣະດົກທີ່ໄດ້ເສັຽຊີວິດນັ້ນ ຫາກໄດ້ມອບຊັບສ່ວນໃດສ່ວນໜຶ່ງຕາມພິໄນກຳໃຫ້ຜູ້ສືບທອດມູນມໍຣະດົກ ຕາມກົດໝາຍຜູ້ໃດຜູ້ໜຶ່ງແລ້ວ ຜູ້ສືບທອດຜູ້ນີ້ ນອກຈາກຈະໄດ້ຮັບມູນມໍຣະດົກຕາມພິໄນກຳແລ້ວ ກໍຍັງຈະໄດ້ຮັບພູດສ່ວນມູນມໍຣະດົກທີ່ຕົກທອດໃຫ້ຕົນຕາມກົດໝາຍອີກດ້ວຍ.

### ມາດຕາ 38. ຜູ້ບໍ່ມີສິດຮັບຊັບຕາມພິໄນກຳເປັນລາຍລັກອັກສອນ

ຜູ້ຂຽນພິໄນກຳ, ພະຍານໃນພິໄນກຳ ແລະ ຜົວ ຫລື ເມັຽຂອງພວກກ່ຽວຈະເປັນຜູ້ຮັບຊັບຕາມພິໄນກຳນັ້ນບໍ່ໄດ້.

### ມາດຕາ 39. ການແຕ່ງຕັ້ງຜູ້ປົກຄອງຊັບ

ເຈົ້າມູນມໍຣະດົກມີສິດແຕ່ງຕັ້ງຜູ້ປົກຄອງຊັບ ໃນກໍລະນີທີ່ຜູ້ກ່ຽວຫາກມີຈຸດປະສົງຢາກເຮັດພິໄນກຳມອບຊັບສົມບັດໃຫ້ບຸກຄົນທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

ຜູ້ປົກຄອງຊັບນັ້ນ ອາດຈະແຕ່ງຕັ້ງບຸກຄົນອື່ນເປັນຜູ້ປົກຄອງຊັບແທນຕົນກໍໄດ້ ເວັ້ນເສັຽແຕ່ເຈົ້າມູນມໍຣະດົກຫາກໄດ້ກຳນົດໄວ້ຢ່າງອື່ນໃນພິໄນກຳ.

ສິດຂອງຜູ້ປົກຄອງຊັບຈະໝົດໄປ ໃນເມື່ອເດັກນັ້ນຫາກເຖິງກະສຽນອາຍຸ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຫາກໄດ້ກັບຄືນສູ່ສະພາບປົກກະຕິແລ້ວ.

## ໝວດທີ 2 ການລຶບລ້າງພິໄນກຳ

**ມາດຕາ 40. ການປ່ຽນແປງ ຫລື ລຶບລ້າງພິໄນກຳ**

ເຈົ້າມູນມໍຣະດົກ ມີສິດປ່ຽນແປງ ຫລື ລຶບລ້າງພິໃນກຳທີ່ຕົນເຮັດຂຶ້ນໄດ້ທຸກເວລາ ດ້ວຍການເຮັດພິໄນກຳໃໝ່.

ພິໄນກຳສະບັບທີ່ເຮັດຂຶ້ນໃໝ່ນີ້ ຈະລຶບລ້າງພິໄນກຳສະບັບກ່ອນທັງໝົດ ຫລື ພຽງແຕ່ສ່ວນໃດສ່ວນໜຶ່ງ ທີ່ມີຂໍ້ຄວາມຂັດກັບພິໄນກຳສະບັບໃໝ່ເທົ່ານັ້ນ.

**ມາດຕາ 41. ສາເຫດທີ່ພາໃຫ້ພິໄນກຳຕົກໄປ**

ພິໄນກຳທີ່ເຮັດຂຶ້ນຈະຕົກໄປ:

1. ເມື່ອຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກໄດ້ເສັຽຊີວິດກ່ອນເຈົ້າມູນມໍຣະດົກ;
2. ເມື່ອຜູ້ສືບທອດມູນມໍຣະດົກຕາມພິໄນກຳ ຫາກໄດ້ສະລະມູນມໍຣະດົກທີ່ກ່າວໄວ້ໃນພິໄນກຳ;
3. ເມື່ອຊັບສົມບັດທີ່ຕົກທອດຕາມພິໄນກຳນັ້ນ ຫາກໄດ້ຖືກສູນຫາຍ ຫລື ຖືກທຳລາຍດ້ວຍເຈົ້າມູນມໍຣະດົກ;
4. ເມື່ອພິໄນກຳນັ້ນຫາກໄດ້ຖືກຮັບຮູ້ວ່າ ເປັນໂມຄະ.

**ມາດຕາ 42. ພິໄນກຳເປັນໂມຄະ**

ຈະຖືວ່າພິໄນກຳເປັນໂມຄະ:

1. ພິໄນກຳທີ່ເຮັດຂຶ້ນໂດຍບຸກຄົນທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
2. ພິໄນກຳທີ່ມີເປົ້າໝາຍບໍ່ຈະແຈ້ງ;
3. ພິໄນກຳທີ່ເຮັດຂຶ້ນດ້ວຍການຖືກບັງຄັບ, ຫລອກລວງ, ປອມແປງ;
4. ພິໄນກຳທີ່ໄດ້ມອບຊັບໃຫ້ແກ່ບຸກຄົນຊຶ່ງໄດ້ບົ່ງໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້.

## ໝວດທີ 3 ການປະຕິບັດພິໄນກຳ

**ມາດຕາ 43. ການແຕ່ງຕັ້ງຜູ້ປະຕິບັດພິໄນກຳ**

ຜູ້ແຕ່ງຕັ້ງຜູ້ປະຕິບັດພິໄນກຳ ອາດຈະແມ່ນ:

1. ເຈົ້າມູນມໍຣະດົກ;
2. ບຸກຄົນຊຶ່ງລະບຸໄວ້ໃນພິໄນກຳ ຫລື ຜູ້ໃດຜູ້ໜຶ່ງທີ່ມີສິດສືບທອດມູນມໍຣະດົກ.

ໃນເມື່ອເຈົ້າມູນມໍຣະດົກຫາກໄດ້ເສັຽຊີວິດ ແລະ ບໍ່ໄດ້ແຕ່ງຕັ້ງຜູ້ປະຕິບັດພິໄນກຳໄວ້ ຫລື ຜູ້ຖືກແຕ່ງຕັ້ງນັ້ນໄດ້ຫາຍສາບສູນ ຫລື ບໍ່ຈິງໃຈປະຕິບັດ ຫລື ບໍ່ສາມາດປະຕິບັດໄດ້ ແມ່ນສານເປັນຜູ້ແຕ່ງຕັ້ງຜູ້ປະຕິບັດພິໄນກຳ.

**ມາດຕາ 44. ສິດ ແລະ ພັນທະຂອງຜູ້ປະຕິບັດພິໄນກຳ**

ພິໄນກຳຈະນຳມາປະຕິບັດໄດ້ກໍຕໍ່ເມື່ອ ເຈົ້າມູນມໍຣະດົກຫາກໄດ້ເສັຽຊີວິດໄປແລ້ວ.

ຜູ້ປະຕິບັດພິໄນກຳ ມີສິດເຮັດທຸກສິ່ງທຸກຢ່າງທີ່ຈຳເປັນ ແລະ ເຫມາະສົມເພື່ອປະຕິບັດພິໄນກຳ.

ຜູ້ປະຕິບັດພິໄນກຳຈະບໍ່ໄດ້ຮັບບຳເນັດໃນການປະຕິບັດພິໄນກຳນັ້ນເລີຍ ມີແຕ່ສິດຮັບເອົາຄ່າທົດແທນການໃຊ້ຈ່າຍອັນຈຳເປັນ ໃນການປົກປັກຮັກສາ ແລະ ຄຸ້ມຄອງມູນມໍຣະດົກເທົ່ານັ້ນ.

ຜູ້ປະຕິບັດພິໄນກຳ ມີພັນທະລາຍງານກ່ຽວກັບການເຄື່ອນໄຫວຂອງຕົນ ໃຫ້ຜູ້ສືບທອດມູນມໍຣະດົກຊາບ ຕາມຄຳສະເຫນີຂອງຜູ້ກ່ຽວ.

ພາກທີ IV ວ່າດ້ວຍການປົກປັກຮັກສາມູນມໍຣະດົກ ແລະ ຄວາມຮັບຜິດຊອບຂອງຜູ້ສືບທອດ

## ຫມວດທີ 1 ການປົກປັກຮັກສາມູນມໍຣະດົກ

**ມາດຕາ 45. ມາດຕະການປົກປັກຮັກສາມູນມໍຣະດົກ**

ເມື່ອມີການຮ້ອງຂໍໃຫ້ຄຸ້ມຄອງມູນມໍຣະດົກແລ້ວ ຫລື ໃນກໍລະນີທີ່ຈຳເປັນນັ້ນ ສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ ບ່ອນທີ່ເປີດການສືບທອດມູນມໍຣະດົກນັ້ນ ຕ້ອງວາງມາດຕະການປົກປັກຮັກສາມູນມໍຣະດົກ ຫລື ແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ ເພື່ອຮັບປະກັນຜົນປະໂຫຍດຂອງລັດ, ຂອງບັນດາຜູ້ສືບທອດມູນມໍຣະດົກ ແລະ ເຈົ້າຫນີ້.

**ມາດຕາ 46. ບຸກຄົນທີ່ບໍ່ສາມາດເປັນຜູ້ຄຸ້ມຄອງມູນມໍຣະດົກ**

ບຸກຄົນທີ່ບໍ່ສາມາດເປັນຜູ້ຄຸ້ມຄອງມູນມໍຣະດົກໄດ້ ມີຄື:

1. ຜູ້ທີ່ຍັງບໍ່ທັນເຖິງກະສຽນອາຍຸ;
2. ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
3. ຜູ້ທີ່ຖືກສານຕັດສິນວ່າ ເປັນຜູ້ລົ້ມລະລາຍ.

**ມາດຕາ 47. ສິດ ແລະ ຫນ້າທີ່ຂອງຜູ້ຄຸ້ມຄອງມູນມໍຣະດົກ**

ຜູ້ຄຸ້ມຄອງມູນມໍຣະດົກມີສິດ ແລະ ຫນ້າທີ່ດັ່ງນີ້ :

1. ເຮັດບັນຊີມູນມໍຣະດົກ ໂດຍຊ້ອງຫນ້າຜູ້ສືບທອດມູນມໍຣະດົກ. ໃນກໍລະນີທີ່ມີຜູ້ສືບທອດມູນມໍຣະດົກຫລາຍຄົນ ກໍຕ້ອງເຮັດຊ້ອງຫນ້າຜູ້ສືບທອດ ມູນມໍຣະດົກນັ້ນຢ່າງຫນ້ອຍ ສອງຄົນ ໂດຍໃຫ້ແລ້ວພາຍໃນກຳນົດ ຫນຶ່ງເດືອນ ນັບແຕ່ມື້ທີ່ໄດ້ຖືກແຕ່ງຕັ້ງເປັນຕົ້ນໄປ.

2. ຮັບຄຳຮ້ອງຂອງເຈົ້າໜີ້ ແລະ ຊຳລະໜີ້ສິນຂອງເຈົ້າມູນມໍຣະດົກ ກ່ອນຜູ້ສືບທອດຈະຮັບເອົາມູນມໍຣະດົກ;

3. ແບ່ງປັນມູນມໍຣະດົກໃຫ້ບັນດາຜູ້ສືບທອດຕາມພູດຂອງແຕ່ລະຄົນ.

ຜູ້ຄຸ້ມຄອງມູນມໍຣະດົກບໍ່ມີສິດທວງເອົາຄ່າບຳເນັດໃນການຄຸ້ມຄອງມູນມໍຣະດົກ ເວັ້ນເສຍແຕ່ຜູ້ສືບທອດຫາກເຫັນດີມອບໃຫ້ເທົ່ານັ້ນ.

### ມາດຕາ 48. ການລົບລ້າງແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກ

ຖ້າວ່າຜູ້ຄຸ້ມຄອງມູນມໍຣະດົກ ຫາກບໍ່ໄດ້ປະຕິບັດຕາມສິດ ແລະ ໜ້າທີ່ຂອງຕົນ ຫລື ໄດ້ປະຕິບັດດ້ວຍຄວາມປະໝາດ ຫລື ໂດຍບໍ່ມີຄວາມບໍລິສຸດໃຈແລ້ວ ສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານທີ່ກ່ຽວຂ້ອງມີສິດລົບລ້າງການແຕ່ງຕັ້ງຜູ້ຄຸ້ມຄອງມູນມໍຣະດົກດັ່ງກ່າວ ແລ້ວແຕ່ງຕັ້ງຜູ້ຄຸ້ມຄອງຜູ້ໃຫມ່ແທນ ພາຍໃນກຳນົດເວລາ ເຈັດວັນ ນັບແຕ່ມື້ທີ່ໄດ້ລົບລ້າງການແຕ່ງຕັ້ງນັ້ນເປັນຕົ້ນໄປ.

## ໝວດທີ 2 ຄວາມຮັບຜິດຊອບຂອງຜູ້ສືບທອດມູນມໍຣະດົກ

### ມາດຕາ 49. ການຊຳລະໜີ້ສິນ

ຜູ້ສືບທອດມູນມໍຣະດົກຕາມກົດໝາຍ ຫລື ຕາມພິໄນກຳ ຕ້ອງຊຳລະໜີ້ສິນຂອງເຈົ້າມູນມໍຣະດົກບໍ່ໃຫ້ເກີນພູດມູນມໍຣະດົກທີ່ຕົນໄດ້ຮັບ.

ຖ້າວ່າ ມູນມໍຣະດົກຫາກຍັງບໍ່ທັນໄດ້ແບ່ງປັນ ເຈົ້າໜີ້ກໍມີສິດສະເຫນີໃຫ້ຜູ້ສືບທອດມູນມໍຣະດົກ ຫລື ຜູ້ຄຸ້ມຄອງມູນມໍຣະດົກນັ້ນຊຳລະໜີ້ສິນໃຫ້ຕົນທັງຫມົດ.

ຖ້າວ່າມູນມໍຣະດົກ ຫາກໄດ້ແບ່ງປັນກັນຫມົດແລ້ວ ເຈົ້າໜີ້ອາດຈະສະເຫນີໃຫ້ຜູ້ສືບທອດມູນມໍຣະດົກຜູ້ໃດຜູ້ຫນຶ່ງ ຊຳລະໜີ້ສິນໃຫ້ຕົນກໍໄດ້. ໃນກໍລະນີ ທີ່ຜູ້ສືບທອດມູນມໍຣະດົກຜູ້ໃດຜູ້ຫນຶ່ງຫາກໄດ້ຊຳລະໜີ້ສິນໃຫ້ແກ່ເຈົ້າໜີ້ເກີນກ່ວາສ່ວນທີ່ຕົນຈະຕ້ອງຊຳລະແລ້ວຜູ້ສືບທອດຜູ້ອື່ນໆ ກໍຕ້ອງສະເລັ່ຽການທົດແທນຄ່າຊຳລະໜີ້ສິນນັ້ນຄືນໃຫ້ຜູ້ກ່ຽວ.

ຖ້າວ່າຜູ້ສືບທອດມູນມໍຣະດົກຜູ້ໃດຜູ້ຫນຶ່ງຫາກຕົກຢູ່ໃນສະພາບທີ່ບໍ່ສາມາດຊຳລະໜີ້ສິນຕາມພູດຂອງຕົນໄດ້ນັ້ນ ຜູ້ສືບທອດຜູ້ອື່ນໆ ຕ້ອງຮັບຜິດຊອບສະເລັ່ຽໃຊ້ໜີ້ສິນແທນຜູ້ກ່ຽວໃຫ້ເຈົ້າໜີ້.

ການຊຳລະໜີ້ສິນຂອງເຈົ້າມູນມໍຣະດົກ ໃຫ້ຄິດໄລ່ເອົາແຕ່ໃນຊັບສົມບັດທີ່ເປັນມູນມໍຣະດົກເທົ່ານັ້ນ.

### ມາດຕາ 50. ການທີ່ບໍ່ທັນໄດ້ຊຳລະໜີ້ສິນຂອງຜູ້ສືບທອດມູນມໍຣະດົກ

ຜູ້ຄຸ້ມຄອງມູນມໍຣະດົກອາດຈະມອບພູດທັງຫມົດ ຫລື ສ່ວນໃດສ່ວນຫນຶ່ງຂອງມູນມໍຣະດົກທີ່ຄວນໄດ້ຮັບໃຫ້ແກ່ຜູ້ສືບທອດມູນມໍຣະດົກ ຜູ້ໃດຜູ້ຫນຶ່ງກໍໄດ້ ຖ້າວ່າຜູ້ກ່ຽວຫາກຍັງບໍ່ທັນໄດ້ຊຳລະໜີ້ສິນທີ່ຕົກເປັນພູດຂອງຕົນ.

## ມາດຕາ 51. ກຳນົດເວລາໃນການທວງໜີ້ສິນ

ເຈົ້າໜີ້ມີສິດທວງເອົາໜີ້ສິນຂອງຕົນນຳຜູ້ສືບທອດທີ່ໄດ້ຮັບເອົາມູນມໍລະດົກ ຫລື ນຳຜູ້ຄຸ້ມຄອງມູນມໍລະດົກ ຫລື ຜູ້ປະຕິບັດພິໄນກຳ ຫລື ຍື່ນຄຳຮ້ອງເພື່ອທວງເອົາໜີ້ສິນຕໍ່ສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ ບ່ອນທີ່ເປີດການສືບທອດມູນມໍລະດົກ ຫລື ຕໍ່ສານພາຍໃນກຳນົດ ຫົກເດືອນ ນັບແຕ່ມື້ທີ່ໄດ້ເປີດການສືບທອດມູນມໍລະດົກເປັນຕົ້ນໄປ. ຖ້າວ່າເຈົ້າໜີ້ຫາກບໍ່ໄດ້ທວງເອົາໜີ້ສິນ ຫລື ບໍ່ໄດ້ຍື່ນຄຳຮ້ອງທວງເອົາໜີ້ສິນຂອງຕົນພາຍໃນກຳນົດ ຫົກເດືອນແລ້ວ ເຈົ້າໜີ້ກໍຈະໝົດສິດໄປ ເວັ້ນເສັຽແຕ່ຜູ້ກ່ຽວຫາກມີເຫດຜົນພຽງພໍເທົ່ານັ້ນ.

## ມາດຕາ 52. ການແບ່ງປັນມູນມໍລະດົກທີ່ບໍ່ສາມາດຕົກລົງກັນໄດ້

ຖ້າວ່າການແບ່ງປັນມູນມໍລະດົກຫາກບໍ່ສາມາດຕົກລົງກັນໄດ້ ລະຫວ່າງ ພວກຜູ້ສືບທອດມູນມໍລະດົກດ້ວຍກັນແລ້ວ ກໍແມ່ນສານຈະເປັນຜູ້ຕົກລົງ.